# ສິ່ງທີ່ສຳຄັນເພື່ອຮັບປະກັນໃນການ ສີດຢາຂ້າຫຍ້າໃຫ້ໄດ້ຮັບຜົນດີ

## 1. ກ່ອນສີດຢາຂ້າຫຍ້າທຸກຄັ້ງຄວນສັງເກດສະພາບອາກາດໃຫ້ດີ.



❑ ຖ້າຫາກມີພະຍຸເຂົ້າຄວນຫຼີກເວັ້ນໃນການສີດຢາ ເພາະວ່າມັນຈະມີຄວາມສ່ຽງນ້ຳຝົນຈະເຊີລ້າງນ້ຳຢາໄປໝົດ ແລະຜົນໄດ້ຮັບອອກມາເຮົາຈຳເປັນຕ້ອງໄດ້ສີດ ຢາຄືນໃໝ່.
(ຜົນຕາມມາເຮົາເສຍເວລາແລະເສຍເງິນ)





❑ ການສີດຢາຄວນຫຼີກເວັ້ນຊ່ວງທີ່ມີແສງແດດກ້າ ແລະ ຮ້ອນແຮງຫຼາຍ ເພາະວ່າການສີດຢາຈະໄດ້ປະສິດທິພາບຕ່ຳ

✓ ຕົ້ນຫຍ້າຈະດູດຊຶມເອົາຢາໄດ້ໜ້ອຍ
( ຈຳພວກຢາປະເພດດູດຊຶມ )

✓ ມີຄວາມຫຍຸ້ງຍາກໃນການເຮັດວຽກເພາະວ່າຮ້ອນຫຼາຍໂພດ.



❑ ຖ້າວ່າມີລົມແຮງ,ເຮົາຄວນຫຼີກເວັ້ນ ໃນການສີດຢາ ເພາະວ່າການສີດຢາ ຈະໄດ້ຮັບຜົນຕ່ຳ ( ການສຳຜັດຂອງ ຢາ ກັບວັດສະພືດແມ່ນຕ່ຳ ) ແລະ ສິ່ງເລົ່ານັ້ນອາດຈະເກີດເປັນອັນຕະລາຍຕໍ່ຜູ້ສີດຢານັ້ນເອງ.

## 2. ບັນດາໄຮ່ທີ່ຈະສີດຢານັ້ນຄວນສັງເກດ ແລະ ປະເມີນເບິ່ງວັດສະພືດໃຫ້ດີກ່ອນ.




❑ ກ່ອນການສີດຢາຄວນພິຈາລະນາໃຫ້ດີກ່ອນກ່ຽວກັບປະເພດຢາທີ່ຈະນຳໃຊ້ ແລະ ປະລິມານອີງຕາມເງື່ອນໄຂຂອງປະເພດຫຍ້າ ແລະ ການຄຸມຂອງຫຍ້າໃນພື້ນທີ່ໄຮ່.

## 3. ສິ່ງທີ່ຄວນປະຕິບັດໃນຄະນະທີ່ສີດຢາ...



❑ ການສີດຢາທຸກໆຄັ້ງເພື່ອຢາກໄດ້ປະສິດທິພາບດີຄວນສີດຊ່ວງວັດສະພືດທີ່ຍັງອ່ອນ ແລະ ກຳລັງຂະຫຍາຍຕົວ.



❑ ບໍ່ຄວນສີດຢາໃນພື້ນທີ່ໄຮ່ທີ່ມີຫຍ້າແກ່ຫຼາຍໂພດ ເພາະວ່າຈະໄດ້ປະສິດທິພາບຕ່ຳມີຄວາມສ່ຽງຕໍ່ສຸຂະພາບຂອງຜູ້ສີດຢາ,ທາງທີ່ດີຄວນຕັດຫຍ້າລົງກ່ອນຈຶ່ງສີດຢາ.



❑ ໃນຄະນະສີດຢາແມ່ນມີຄວາມຈຳເປັນຕ້ອງຍ່າງໃຫ້ສະໝ່ຳສະເໝີ ແລະ ໄປເປັນແຖວເພື່ອໃຫ້ມັນໄດ້ຮັບຜົນດີ.ສະນັ້ນ,ຄວນຫຼີກເວັ້ນການຍ່າງແບບຊິກແຊກເພາະວ່າມັນຈະເປັນການເປືອງນ້ຳ ແລະ ຢາຫຼາຍໂພດ ແລະ ການສີດຢາກໍຈະມີຄວາມສ່ຽງບໍ່ສະໝ່ຳ ສະເໝີ.

ຄວນນຳໃຊ້ຜ້າແພໄວ້ເພື່ອຕອງນ້ຳສຳລັບສີດຢາເພື່ອບໍ່ໃຫ້ຫົວສີດຕັນໃນເວລາສີດຢາ ແລະ ອີກອັນໜຶ່ງສິ່ງບໍ່ຄວນລືມໃນການປ້ອງກັນຮ່າງກາຍພວກທ່ານເອງ !!!



Illustrations : Hoà TRAN QUOC

CIRAD
NAFRI

ໂຄງການ ນິເວດກະສິກຳ
ໂຄງການ ພັດທະນາຊົນນະບົດ 4 ເມືອງໃຕ້ ແຂວງ ໄຊຍະບູລີ

PCADR PASS

# ສິ່ງທີ່ຄວນປະຕິບັດຕໍ່ກັບຫຼັກການອັນສຳຄັນ ໃນການສີດຢາ.

## ▪ ທຸກໆຄັ້ງໃນການສີດຢາຕ້ອງປ້ອງກັນຮ່າງກາຍໃຫ້ດີ ແລະ ຕ້ອງຍຶດຖືກົດລະບຽບຄູ່ມືການນຳໃຊ້ເອກະສານຢາແຕ່ລະຊະນິດໃຫ້ດີ









❑ ຕ້ອງລະມັດລະວັງຕໍ່ກັບຢາທີ່ມີພິດແຮງໃນເມື່ອປະສົມຢາ ແລະ ໃນເວລາສີດ,ຕອ້ງປ້ອງກັນຮ່າງກາຍໃຫ້ດີຕ້ອງໃສ່ໝວກ, ໃສ່ເຄື່ອງປິດປາກປິດດັງ, ໃສ່ຖົງມື, ໃສ່ໂສ້ງ, ເສື້ອແຂນຍາວ, ໃສ່ເຄື່ອງກັນຂາ ,ໃສ່ເກີບບົດ ຫຼື ເກີບຫຸ້ມຄໍ່.

## ▪ ຕ້ອງກວດເຊັກເບິ່ງອຸປະກອນບັ້ງສີດທຸກຄັ້ງກ່ອນການສີດຢາ.






## ▪ ຕ້ອງຍຶດຖືອັດຕາປະລິມານການນຳໃຊ້ທີ່ໄດ້ແນະນຳໄວ້.




## ▪ ນຳໃຊ້ຫົວສີດທີ່ດີ.



## ▪ ສິ່ງທີ່ຄວນປະຕິບັດພາຍຫຼັງສີດຢາແລ້ວ...



❑ ພາຍຫຼັງສີດຢາແລ້ວຕ້ອງປ່ອຍນ້ຳຢາອອກໃຫ້ໝົດຢູ່ໃນໄຮ່ທີ່ສີດຢານັ້ນແລ້ວຈຶ່ງອະນາໄມບັ້ງສີດ

❑ ການຖອກນ້ຳຢາ ແລະ ລ້າງອຸປະກອນຄວນລ້າງໃຫ້ຫ່າງໄກຈາກແຫຼ່ງນ້ຳ, ຈາກ ໜອງ, ນ້ຳສ້າງເພື່ອບໍ່ໃຫ້ເກີດມົນລະພິດຕໍ່ສະພາບແວດລ້ອມ ແລະ ສຸຂະພາບຂອງພວກທ່ານເອງ.





❑ ພາຍຫຼັງສີດຢາແລ້ວຕ້ອງລ້າງອຸປະກອນການສີດຢາທຸກຊະນິດກ່ອນການເກັບມ້ຽນ.
❑ ເຄື່ອງ ນຸ່ງຊຸດປ້ອງກັນຮ່າງກາຍກໍຕ້ອງ ຊັກ ໃຫ້ສະອາດແລ້ວຕາກໃຫ້ແຫ້ງກ່ອນການເກັບມ້ຽນ ເຊັ່ນ ກັນ.



❑ ພາຍຫຼັງສີດຢາແລ້ວຕ້ອງອາບນ້ຳດ້ວຍສະບູ, ສະຫົວ ແລະ ຫ້າມດື່ມເຫຼົ້າຫຼັງສີດຢາແລ້ວພາຍໃນ 2 ຊົ່ວ.




❑ ສານເຄມີຢາຂ້າຫຍ້າ ແລະ ເຄື່ອງອຸປະກອນຕ້ອງເກັບມ້ຽນໃຫ້ຫ່າງໄກຈາກມືເດັກ ແລະ ບ່ອນຢູ່ອາໄສ.
❑ ບັນດາສິ່ງເສດເຫຼືອກວດຢາຕ່າງໆພາຍຫຼັງໃຊ້ໝົດແລ້ວ ຕ້ອງຂຸດຂຸມຝັງ ດິນໄວ້




Illustrations et photos: Hoà TRAN QUOC

ໂຄງການ ນິເວດກະສິກຳ

ໂຄງການ ພັດທະນາຊົນນະບົດ 4 ເມືອງໃຕ້ ແຂວງ ໄຊຍະບູລີ